**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

------------------------------

ນະຄອນຫຼວງວຽງຈັນ

ອົງການກວດກາລັດ

ເລກທີ 290 /ອກລ.ນວ

ວັນທີ 15 ຕຸລາ 2024

ຂາເຂົ້າ
ສຳນັກງານອົງການປົກຄອງ ນວ
ໜ່ວຍງານບໍລິການປະຕູດຽວ
ເລກທີ: 4702
ວັນທີ: 16.10.24

# ບົດລາຍງານ

**ຮຽນ:** ທ່ານ ເຈົ້າຄອງ ນະຄອນຫຼວງວຽງຈັນ ທີ່ເຄົາລົບ ແລະ ນັບຖື.

**ເລື່ອງ:** ຜົນການຄົ້ນຄວ້າຄຳຮ້ອງ-ຄຳສະເໜີຂອງທ້າວ ອາລີວັນ ສີຫາລາ ຂໍໃຫ້ກວດກາຄືນພະນັກງານພ້ອມທັງປະຕິບັດວິໄນຜູ້ທີ່ມີສ່ວນພົວພັນກັບໃບຕາດິນເລກທີ 1269, ລົງວັນທີ 31 ກໍລະກົດ 2015 ຕອນດິນຕັ້ງຢູ່ບ້ານ ໂນນສະອາດ, ເມືອງ ໄຊທານີ ນະຄອນຫຼວງວຽງຈັນ.

- **ອີງຕາມ** ຂໍ້ຕົກລົງ ສະບັບເລກທີ 392/ອກຫລ, ລົງວັນທີ 07 ພະຈິກ 2023 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການກວດກາລັດແຂວງ, ນະຄອນຫຼວງ.
- **ອີງຕາມ** ໜັງສືທາງລັດຖະການ ສະບັບເລກທີ 2376/ຫອນວ, ລົງວັນທີ 05 ທັນວາ 2023 ຂອງຫ້ອງວ່າການ ນະຄອນຫຼວງວຽງຈັນ.
- ອີງຕາມ ບົດລາຍງານ ສະບັບເລກທີ 2384/ພຊສ.ນວ, ລົງວັນທີ 06 ມີນາ 2024 ຂອງພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ.

ອົງການກວດກາລັດ ນະຄອນຫຼວງວຽງຈັນ ໄດ້ຮັບໜັງສືທາງລັດຖະການ ສະບັບເລກທີ 2376/ຫອນວ, ລົງວັນທີ 05 ທັນວາ 2023 ເຊິ່ງມີເນື້ອໃນວ່າ: " ມອບໃຫ້ອົງການກວດກາລັດ ນະຄອນຫຼວງວຽງຈັນ ເພື່ອຄົ້ນຄວ້າມີຄຳເຫັນ "; ຜ່ານການເກັບກຳຂໍ້ມູນ, ເຊີນບຸກຄົນກ່ຽວຂ້ອງ ແລະ ຄົ້ນຄວ້າບັນດາເອກະສານທີ່ຢູ່ໃນສຳນວນ ຂໍຮຽນລາຍງານທ່ານ ເຈົ້າຄອງ ນະຄອນຫຼວງວຽງຈັນ ດັ່ງນີ້:

## I. ສະພາບລວມ:

ກ່ຽວກັບໃບຕາດິນ ເລກທີ 1269, ແຜນທີ່ດິນເລກທີ A 250.002 ມີເນື້ອທີ່ 11.921 ຕາແມັດ, ລົງວັນທີ 31 ກໍລະກົດ 2015 ອອກຊື່ນາງ ຟ້າໃສ ອິວາກິ; ຕອນດິນຕັ້ງຢູ່ບ້ານ ໂນນສະອາດ, ເມືອງ ໄຊທານີ ນະຄອນຫຼວງວຽງຈັນ; ໃນຊ່ວງປີ 2019-2020 ທ້າວ ອາລີວັນ ສີຫາລາ ອາຍຸ 40 ປີ, ສັນຊາດ ລາວ, ອາຊີບ ນັກທຸລະກິດ, ປັດຈຸບັນຢູ່ບ້ານ ວັດນາກ, ເມືອງ ສີສັດຕະນາກ ນະຄອນຫຼວງວຽງຈັນ (ຜູ້ຊື້ຕອນດິນນຳນາງ ຈັນຟ້າໃສ ອິວາກິ ຕາມໃບຢັ້ງຢືນການຊື້ຂາຍ ເລກທີ 158/ປດ/ນສອ, ລົງວັນທີ 11 ທັນວາ 2018 ແລະ ໃບຢັ້ງຢືນມອບ

ກຳມະສິດ ເລກທີ 168, ລົງວັນທີ 11 ທັນວາ 2018) ໄດ້ເອົາໃບຕາດິນ ເລກທີ 1269 ຈຸດປະສົງເພື່ອຂໍຢັ້ງຢືນຄວາມຖືກຕ້ອງຂອງໃບຕາດິນຢູ່ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ ພາຍຫຼັງເອກະສານຍື່ນແລ້ວ ຕໍ່ມາຈຶ່ງໄດ້ຄຳຕອບແບບປາກເປົ່າຈາກພະນັກງານຈຸງານສຳມະໂນຕາດິນວ່າ: ໃບຕາດິນດັ່ງກ່າວມີຄຳສັ່ງອາຍັດຊັບບໍ່ສາມາດເຄື່ອນໄຫວໄດ້ ຕາມຄຳສັ່ງ ເລກທີ 115/ພຍສທ.ຂຈສ, ລົງວັນທີ 07 ກຸມພາ 2019 ແລະ ທ້າວ ອາລີວັນ ສີທາລາ ກໍ່ໄດ້ຂໍຖອນ, ທວງເອົາໃບຕາດິນຄືນມາໂດຍຕະຫຼອດ (ຖືກຊ່ວງໂຄວິດ 19); ວັນທີ 05 ກໍລະກົດ 2022 ທ້າວ ອາລີວັນ ສີທາລາ ໄດ້ປະກອບເອກະສານຂໍຖອນໃບຕາດິນດັ່ງກ່າວເພື່ອເອົາເມືອເກັບຮັກສາໄວ້ ຕາມເອກະສານຂາເຂົ້າ ເລກທີ 3040/ພຊສ.ນວ, ລົງວັນທີ 05 ກໍລະກົດ 2022; ຕໍ່ມາທ້າວ ກົງແສງ ແສງດວງຈັນ ຜູ້ຮັບຜິດຊອບສຳນວນເອກະສານ ຢູ່ຈຸງານສຳມະໂນຕາດິນ (ພຊສ.ນວ) ໄດ້ແຈ້ງຕໍ່ທ້າວ ອາລີວັນ ສີທາລາ ວ່າ: ໃບຕາດິນດັ່ງກ່າວໄດ້ເສຍຫາຍແລ້ວ ເມື່ອເປັນແນວນັ້ນທ້າວ ກົງແສງ ແສງດວງຈັນ ໄດ້ແນະນຳໃຫ້ທ້າວ ອາລີວັນ ສີທາລາ ປະກອບເອກະສານເຮັດໜັງສືແຈ້ງເສຍຫາຍມາຍື່ນ (ພຊສ.ນວ) ເພື່ອນຳສົ່ງຍື່ນຕໍ່ສານປະຊາຊົນເຂດ II ນະຄອນຫຼວງວຽງຈັນ ເພື່ອລຶບລ້າງໃບຕາດິນເກົ່າ ແລະ ອອກໃໝ່ ຕາມຂັ້ນຕອນຂອງກົດໝາຍ; ໃນຊ່ວງການດຳເນີນຂອງສານປະຊາຊົນເຂດ II ນະຄອນຫຼວງວຽງຈັນ ທາງ ພຊສ.ນວ ໄດ້ແຈ້ງຕໍ່ທ້າວ ອາລີວັນ ສີທາລາ ວ່າໃບຕາດິນດັ່ງກ່າວໄດ້ພົບເຫັນແລ້ວ ແຕ່ບໍ່ສາມາດສົ່ງຄືນໄດ້ເນື່ອງຈາກວ່າມີຄຳສັ່ງຂອງພະແນກຍຸຕິທຳ, ຂະແໜງຈັດຕັ້ງປະຕິບັດຄຳຕັດສິນຂອງສານ ນະຄອນຫຼວງວຽງຈັນ ເລກທີ 431/ພຍທ.ຂຈສ, ລົງວັນທີ 29 ມີນາ 2021 ດ້ວຍເຫດນີ້ທ້າວ ອາລີວັນ ສີທາລາ ບໍ່ພໍໃຈເຊິ່ງເສຍເວລາ ແລະ ເສຍເງິນຄ່າທຳນຽມສານຈຳນວນ 7.000.000 ກີບ (ຕາມບົດບັນທຶກຄຳໃຫ້ການຄັ້ງວັນທີ 30 ມັງກອນ 2024 ແລະ ຄຳສັ່ງຊັດມ້ຽນ ເລກທີ 02/ສປຊ.ຂ II, ລົງວັນທີ 30 ມັງກອນ 2024) ຈຶ່ງເກີດການຮ້ອງຟ້ອງຂຶ້ນ.

- **ການເກັບກຳຂໍ້ມູນ:**

ອີງການກວດກາລັດ ນະຄອນຫຼວງວຽງຈັນ ໄດ້ເຊີນບຸກຄົນທີ່ກ່ຽວຂ້ອງມາໃຫ້ຂໍ້ມູນ ຈຳນວນ 13 ຄັ້ງ; ການຈໍລະຈອນເອກະສານພາຍໃນຂະແໜງທີ່ດິນ ແລະ ຈຸງານຄື ທ້າວ ກົງແສງ ແສງດວງຈັນ ໄດ້ຍອມຮັບວ່າຕົນເອງເປັນຜູ້ຮັບຜິດຊອບຄົ້ນຄວ້າສຳນວນນີ້ ແຕ່ບໍ່ຮູ້ວ່າສຳນວນ+ໃບຕາດິນສະບັບຕົ້ນໃຜເອົາໄປຕໍ່; ຕໍ່ມາຜູ້ຮັບຜິດຊອບວຽກງານຂາເຂົ້າ-ອອກຂອງຈຸງານ ໄດ້ມອບໃຫ້ທ້າວ ບຸນເພີ່ມ ສີສຸພັນນະວົງ ທີ່ຮັບຜິດຊອບຄົ້ນຄວ້າວຽກຕາມຄຳສັ່ງຂອງປະຕິບັດຄຳຕັດສິນຂອງສານ ແຕ່ເວລາໄປພົວພັນເອົາສຳນວນມາຄົ້ນຄວ້າແມ່ນບໍ່ຮູ້ວ່າຜູ້ກ່ຽວໄປເອົາສຳນວນມາແຕ່ນຳຜູ້ໃດ ເພາະບໍ່ມີລາຍເຊັນໃນປຶ້ມຕິດຕາມການສົ່ງມອບ-ຮັບເອກະສານມາຢັ້ງຢືນ (ຕາມບົດລາຍງານບໍ່ມີ ເລກທີ, ລົງວັນທີ); ຕໍ່ກັບທ້າວ ສີສຸພັນ ໃສຈັນດີ ຜູ້ຮັບຜິດຊອບການລົງວັດແທກ, ແຍກຕອນ-ໂຮມຕອນ ຜູ້ກ່ຽວຍອມຮັບວ່າໃນຊຸດສຳນວນດັ່ງກ່າວມີໃບຕາດິນແທ້ຂັດມາພ້ອມ; ແຕ່ນາງ ຄຳແກ້ວ ພົມມະຫາໄຊ ຜູ້ຮັບຜິດຊອບຂາເຂົ້າ-ອອກຈຸງານແມ່ນໄດ້ສົ່ງມອບ-ຮັບເອກະສານໃຫ້ທ້າວ ສີສຸພັນ ໃສຈັນດີ ວ່າມີແຕ່ສຳນວນ, ໃບທະບຽນ, ບໍ່ມີໃບຕາດິນ (ມີປຶ້ມຕິດຕາມການເຊັນສົ່ງມອບ-ຮັບເອກະສານຢັ້ງຢືນ).

ອົງການກວດກາລັດ ນະຄອນຫຼວງວຽງຈັນ ໄດ້ມີໜັງສືທາງລັດຖະການ ເລກທີ 64/ອກລ.ນວ, ລົງວັນທີ 04 ມີນາ 2024 ມອບໃຫ້ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ ແກ້ໄຂບັນຫາດັ່ງກ່າວຕາມພາລະບົດບາດ ແລະ ໄດ້ມີບົດລາຍງານ ເລກທີ 2384/ພຊສ.ນວ, ລົງວັນທີ 06 ມີນາ 2024 ຮຽນຫາທ່ານ ປະທານອົງການກວດກາລັດ ນະຄອນຫຼວງວຽງຈັນ ເພື່ອຊາບຕໍ່ບັນຫາທີ່ເກີດຂຶ້ນ.

**II. ທັດສະນະ:**

1. ຕໍ່ກັບ ທ້າວ ອາລີວັນ ສີຫາລາ ສະເໜີຂໍຖອນໃບຕາດິນ ເລກທີ 1269 ນັ້ນໃນຖານະຜູ້ມີກຳມະສິດ ເຫັນວ່າ: ໄລຍະຜ່ານມາຕາມບົດລາຍງານ ພຊສ.ນວ ບໍ່ສາມາດສົ່ງຄືນໃຫ້ໄດ້ເນື່ອງຈາກວ່າໃບຕາດິນດັ່ງກ່າວບໍ່ມີຄຸນຄ່າທາງດ້ານກົດໝາຍແລ້ວ ເພາະມີຄຳສັ່ງຂອງພະແນກຍຸຕິທຳ, ຂະແໜງຈັດຕັ້ງປະຕິບັດຄຳຕັດສິນຂອງສານ ເລກທີ 431/ພຍທ.ຂຈສ, ລົງວັນທີ 29 ມີນາ 2021 ເຫັນຕາມເອກະສານຂອງກະຊວງຍຸຕິທຳ, ຂອງກົມຄຸ້ມຄອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ໄດ້ອອກຄຳສັ່ງ ເລກທີ 125/ກຍ.ກຄສ, ລົງວັນທີ 05 ກັນຍາ 2024 ເລື່ອງ: ລົບລ້າງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຄື: ລົບລ້າງບົດບັນທຶກສະບັບລົງວັນທີ 04 ມີນາ 2021 ແລະ ຄຳສັ່ງ ສະບັບລົງວັນທີ 431/ພຍທ.ຂຈສ, ລົງວັນທີ 29 ມີນາ 2021 ແລະ ນິຕິກຳອື່ນໆ ທີ່ກ່ຽວຂ້ອງກັບການມອບທີ່ດິນຕາມໃບຕາດິນ ເລກທີ 1269 ຂອງຂະແໜງຈັດຕັ້ງປະຕິບັດຄຳຕັດສິນຂອງສານ ນະຄອນຫຼວງວຽງຈັນ ຖິ້ມທັງໝົດ.

2. ເຫັນວ່າ: ທ້າວ ກົງແສງ ແສງດວງຈັນ ວິຊາການຂະແໜງບໍລິຫານ, ຈັດຕັ້ງ ແລະ ກວດກາ (ພຊສ.ນວ) ຜູ້ຮັບຜິດຊອບຄົ້ນຄວ້າສຳນວນເອກະສານ ຂາດຄວາມຮັບຜິດຊອບໃນການຄຸ້ມຄອງເອກະສານ ຈຶ່ງກໍ່ໃຫ້ເກີດໃບຕາດິນເສຍຫາຍຂຶ້ນ ແລະ ສ້າງຄວາມເສຍຫາຍໃຫ້ແກ່ທ້າວ ອາລີວັນ ສີຫາລາ ຕ້ອງຈ່າຍເງິນຄ່າທຳນຽມສານຈຳນວນ 7.000.000 ກີບ.

**3.** ເຫັນວ່າ: ທ້າວ ບຸນເພີ່ມ ສີສຸພົນນະວົງ ວິຊາການຂະແໜງກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ ທີ່ຮັບຜິດຊອບຄົ້ນຄວ້າວຽກຕາມຄຳສັ່ງຂອງປະຕິບັດຄຳຕັດສິນຂອງສານ ແຕ່ເວລາໄປພົວພັນເອົາສຳນວນມາຄົ້ນຄວ້າແມ່ນບໍ່ຮູ້ວ່າຜູ້ກ່ຽວໄປເອົາສຳນວນມາແຕ່ນຳຜູ້ໃດ (ເອົາມາໂດຍພາລະການ) ເພາະບໍ່ມີລາຍເຊັນໃນປຶ້ມຕິດຕາມການສົ່ງມອບ-ຮັບເອກະສານຢັ້ງຢືນ (ຕາມບົດລາຍງານບໍ່ມີ ເລກທີ, ລົງວັນທີ) ຈຶ່ງເກີດບັນຫາຄວາມສັບສົນພາຍໃນຂຶ້ນ.

4. ເຫັນວ່າ: ທ້າວ ສີສຸພົນ ໃສຈັນດີ ວິຊາການຈຸງານວັດແທກ, ຂະແໜງທີ່ດິນ (ພຊສ.ນວ) ຜູ້ກ່ຽວຍອມຮັບວ່າໃນເວລາເຊັນສົ່ງມອບ-ຮັບຊຸດສຳນວນໃບຕາດິນຜູ້ກ່ຽວບໍ່ໄດ້ກວດຊຸດສຳນວນລະອຽດ ມາກວດຕາມພາຍຫຼັງເຫັນມີໃບຕາດິນສະບັບແທ້ຢູ່ນຳຊຸດສຳນວນ ເຊິ່ງເປັນການເລັ່ນເລີ້ຕໍ່ການປະຕິບັດໜ້າທີ່ໃນການກວດກາເອກະສານ.

1) ເພື່ອໃຫ້ບັນຫາດັ່ງກ່າວໄດ້ຮັບການແກ້ໄຂ, ສອດຄ່ອງກັບຄວາມເປັນຈິງ ແລະ ລະບຽບກົດໝາຍຕໍ່ກັບທ້າວ ກົງແສງ ແສງດວງຈັນ, ທ້າວ ບຸນເພີ່ມ ສີສຸວັນນະວົງ ແລະ ທ້າວ ສີສຸພົນໃສຈັນດີ ເຫັນຄວນມອບໃຫ້ ຄະ

ນະພັກຮາກຖານ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ ດຳເນີນການສຳຫຼວດກວດກາ ພະນັກງານຜູ້ທີ່ມີສ່ວນຮ່ວມໃນຄວາມບົກພ່ອງຕໍ່ກັບຄວາມຮັບຜິດຊອບໃນການປະຕິບັດໜ້າທີ່ຂອງຕົນໃນຄັ້ງນີ້ ເຊິ່ງເປັນການກະທຳທີ່ຂາດຄວາມຮັບຜິດຊອບ ແລະ ກົດໜ່ວງທ່ວງດຶງເອກະສານທີ່ບໍ່ຖືກຕ້ອງ.

2) ກ່ຽວກັບທ້າວ ອາລີວັນ ສີທາລາ ທີ່ສະເໜີຂໍຖອນໃບຕາດິນເລກທີ 1269, ລົງວັນທີ 31 ກໍລະກົດ 2015 ສະບັບແທ້ (ປັດຈຸບັນໃບຕາດິນແມ່ນຢູ່ໃນການເກັບຮັກສາຂອງພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ) ເຫັນຄວນໃຫ້ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ ຄົ້ນຄວ້າ, ພິຈາລະນາແກ້ໄຂ ໃຫ້ຜູ້ກ່ຽວຕາມພາລະບົດບາດ ແລະ ກົດໝາຍ.

ດັ່ງນັ້ນ ຈຶ່ງຮຽນລາຍງານມາຍັງທ່ານ ເຈົ້າຄອງ ນະຄອນຫຼວງວຽງຈັນ ຊາບ ແລະ ມີທິດຊີ້ນຳດ້ວຍ.

ຮຽນມາດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ.

**ປະທານອົງການກວດກາລັດ ນະຄອນຫຼວງວຽງຈັນ**

ອົງການກວດກາແຫ່ງລັດ
ອົງການ
ກວດກາລັດ
ນະຄອນຫຼວງວຽງຈັນ

**ບຸນວັນ ຈະສົ່ວເກົ້າ**